e-Commerce ໃນທຸລະກິດຈິງ [e-Commerce Case Study]

Business Online Co., Ltd.

(ທຸລະກິດບໍລິການຂໍ້ມູນບໍລິສັດໄທຜ່ານອອນໄລນ໌)

## 1. ຂໍ້ມູນເບື້ອງຕົ້ນ

「Business Online Co., Ltd ຫລືທີ່ຮຽກວ່າ BOL (www. bol. co. th) ເປັນບໍລິສັດຂອງໄທທີ່ດຳເນີນທຸລະກິດໃຫ້ບໍລິການ-ຂໍ້ມູນກ່ຽວກັບບໍລິສັດ ຈົດທະບຽນໃນປະເທດໄທ ໃນປີ 2536 ບໍລິສັດ ANEW Corporation Co., Ltd. ບໍລິສັດໃນກຸ່ມ Advanced Research Group ໄດ້ກໍ່ຕັ້ງ BOL ຢ່າງເປັນທາງການ ເພື່ອໃຫ້ບໍລິການລູກຄ້າສາມາດສືບຄົ້ນຂໍ້ມູນບໍລິສັດທີ່ຈົດທະບຽນ-ໃນປະເທດໄທຜ່ານທາງອິນເທີລ໌ເນັດ ໃນປີ 2541 BOL ໄດ້ຮ່ວມທຸນກັບບໍລິສັດ Dun & Bradstreet ຊຶ່ງເປັນຜູ້ໃຫ້ບໍລິການຂໍ້ມູນລະ-ດັບໂລກ

ໂດຍໃນປະຈຸບັນ BOL ໃຫ້ບໍລິການຜ່ານອິນເທີລ໌ເນັດຫລັກ ໆ 2 ປະເພດ ໄດ້ແກ່ ບໍລິການ BINGO ແລະບໍລິການ DBThai ຊຶ່ງບໍລິການທັງ 2 ປະເພດ ປະກອບດ້ວຍລາຍລະອຽດ ດັ່ງຕໍ່ໄປນີ້

- ຂໍ້ມູນເບື້ອງຕົ້ນທີ່ກ່ຽວກັບບໍລິສັດ ເຊັ່ນ ຊື່ບໍລິສັດ ເລກທະບຽນ ວັນທີ່ຈັດຕັ້ງບໍລິສັດ ທຸນຈົດທະບຽນ ປະເພດທຸລະກິດ ທີ່ຢູ່ ໝາຍເລກໂຊສັບ ເປັນຕົ້ນ

- ງົບການເງິນ ຊຶ່ງປະກອບດ້ວຍ ງົບດຸນແລະງົບກຳໄລຂາດທຸນທີ່ສົ່ງໃຫ້ແກ່ກົມທະບຽນການຄ້າ ກະຊວງພານິດຍ໌ ຊຶ່ງສາມາດ ຄົ້ນຫາງົບການເງິນຍ້ອນຫລັງໄດ້ຕັ້ງແຕ່ປີ 2536

- ຂໍ້ມູນຜູ້ບໍລິຫານ ຊຶ່ງປະກອບດ້ວຍ ລາຍລະອຽດຂອງຄະນະກຳມະການບໍລິສັດ ລາຍລະອຽດຜູ້ຖືຫຸ້ນ ສັດສ່ວນຂອງການຖືຫຸ້ນ ແບ່ງຕາມສັນຊາດ

- ຂໍ້ມູນຜູ້ກວດສອບບັນຊີ ລາຍຊື່ຜູ້ກວດສອບບັນຊີ ເປັນຕົ້ນ

- ຂໍ້ມູນການວິເຄາະພາບລວມຂອງອຸດສາຫະກຳ ເຊັ່ນ ຂະໜາດຂອງອຸດສາຫະກຳ ອັດຕາການເຕີບໂຕຂອງອຸດສາຫະກຳ ຜູ້ຄ້າລາຍໃຫຍ່ຂອງອຸດສາຫະກຳ ເປັນຕົ້ນ

「ບໍລິສັດໄດ້ຮັບອະນຸຍາດຈາກກົມທະບຽນການຄ້າ ກະຊວງພານິດຍ໌ໃນການໃຫ້ບໍລິການຂໍ້ມູນດັ່ງກ່າວ ຊຶ່ງໃນປະຈຸບັນ BOL ມີຂໍ້ມູນຂອງ-ບໍລິສັດ ຕ່າງ ໆຫລາຍກວ່າ 520, 000 ແຫ່ງທີ່ຈະຕ້ອງປັ່ງປຸງໃຫ້ທັນສະໄໝຢູ່ສະເໝີ

ຄວາມສຳເລັດຂອງ BOL ເກີດຂຶ້ນ ເນື່ອງຈາກທີ່ຜ່ານມາການຄົ້ນຫາຂໍ້ມູນດັ່ງກ່າວມັກຕ້ອງຄົ້ນຫາຈາກໜ່ວຍງານລາດການ ຫລືຈາກໜັງສື-ລາຍນາມ ຂໍ້ມູນບໍລິສັດປະຈຳແຕ່ລະປີ ຊຶ່ງມີຄວາມບໍ່ສະດວກບາງປະການ ເຊັ່ນ

- ຕ້ອງເດີນທາງໄປຄົ້ນຫາຍັງໜ່ວຍງານລາດການ ຊຶ່ງໃຫ້ບໍລິການໃນເວລາລາດການເທົ່ານັ້ນ ແລະມີລະບຽບທີ່ຫຍຸ້ງ-ຍາກໃນການ ຂໍອະນຸຍາດເຂົ້າຄົ້ນຫາຂໍ້ມູນ

- ຂໍ້ມູນສ່ວນໃຫຍ່ຢູ່ໃນຮູບຂອງເອກະສານ ເຮັດໃຫ້ການປັບ-ປຸງຂໍ້ມູນໃຫ້ທັນສະໄໝຢູ່ສະເໝີເປັນໄປໄດ້ຍາກ ແລະບໍ່ສາມາດ ຄົ້ນຫາໄດ້ງ່າຍ

- ເຖິງວ່າການສືບຄົ້ນຈາກໜັງສືລາຍນາມຂໍ້ມູນບໍລິສັດປະຈຳປີຈະມີຕົ້ນທຶນທີ່ຖືກ ແລະສາມາດຊື້ໄວ້ຄອບຄອງໄດ້ ແຕ່ໜັງສືດັ່ງກ່າວ ຈະມີສະເພາະຂໍ້ມູນຂອງບໍລິສັດຂະໜາດໃຫຍ່ພຽງ 1, 000 - 2, 000 ແຫ່ງເທົ່ານັ້ນ

ໃນທາງກົງກັນຂ້າມການໃຫ້ບໍລິການຂໍ້ມູນຜ່ານອິນເທີລ໌ເນັດຂອງ BOL ມີຂໍ້ດີ ໄດ້ແກ່

- ມີຄວາມສະດວກສາມາດຄົ້ນຫາໄດ້ຕະຫລອດ 24 ຊົ່ວໂມງຈາກເຄື່ອງຄອມພິວເຕີທີ່ຕໍ່ເຊື່ອມເຂົ້າກັບອິນເທີລ໌ເນັດ
- ມີການຈັດເກັບຂໍ້ມູນຢ່າງເປັນຮູບແບບ ແລະຄົ້ນຫາໄດ້ງ່າຍ
- ຂໍ້ມູນຕ່າງ ໆມີການປັບ-ປຸງໃນທັນສະໄໝຢູ່ສະເໝີ

## 2. ຂັ້ນຕອນໃນການປະກອບທຸລະກິດ

ໃນປະຈຸບັນ ລູກຄ້າສ່ວນໃຫຍ່ຂອງ BOL ເປັນກຸ່ມຜູ້ປະກອບທຸລະກິດທີ່ຕ້ອງການໃຊ້ຂໍ້ມູນ ເຊັ່ນ ສະຖາບັນການເງິນ ບໍລິສັດຂ້າມຊາດ ບໍລິສັດການຄ້າ ແລະໂລງງານອຸດສາຫະກຳ ເປັນຕົ້ນ ຜູ້ທີ່ສົນໃຈຕ້ອງການໃຊ້ບໍລິການຂອງ BOL ຕ້ອງຕິດຕໍ່ກັບສຳນັກງານຂອງ BOL ແລະຊຳລະຄ່າສະມາຊິກຕາມປະເພດການໃຊ້ບໍລິການ ເມື່ອຊຳລະເງິນແລ້ວ ຊຶ່ງລູກຄ້າຈະໄດ້ຮັບຊື່ບັນຊີ (User ID) ແລະລະຫັດຜ່ານ (Password)

ຂັ້ນຕອນການໃຫ້ບໍລິການມີດັ່ງຕໍ່ໄປນີ້

1. ເມື່ອລົງທະບຽນແລ້ວ ລູກຄ້າຈະສາມາດເຂົ້າສືບຄົ້ນຂໍ້ມູນບໍລິສັດທີ່ຈົດທະບຽນໃນປະເທດໄທ ໂດຍພຽງແຕ່ໃສ່ ຊື່ບໍລິສັດ ຫລືບາງສ່ວນຂອງຊື່ບໍລິສັດທີ່ຕ້ອງການຮູ້ຂໍ້ມູນ
2. ສາມາດຄົ້ນຫາບໍລິສັດຕາມເງື່ອນໄຂຕ່າງ ໆ ເຊັ່ນ ສະຖານທີ່ຕັ້ງ ລາຍໄດ້ ສິນຊັບ ແລະກຳໄລ ເປັນຕົ້ນ
3. ເມື່ອພົບບໍລິສັດທີ່ຕ້ອງການ ລູກຄ້າຈະສາມາດເລືອກເບິ່ງຂໍ້ມູນຕ່າງ ໆຂອງບໍລິສັດ ຊຶ່ງປະກອບດ້ວຍ ຂໍ້ມູນເບື້ອງຕົ້ນຂອງບໍລິສັດ ຂໍ້ມູນງົບການເງິນ ຂໍ້ມູນວິເຄາະອັດຕາສ່ວນທາງການເງິນ ຂໍ້ມູນຊື່ຜູ້ບໍລິຫານ ຂໍ້ມູນຊື່ຜູ້ຖືຫຸ້ນລາຍໃຫຍ່ ເປັນຕົ້ນ

ຢ່າງໃດກໍຕາມ ໃນລາວກາງປີ 2544 BOL ມີແຜນທີ່ຈະໃຫ້ບໍລິການແກ່ລູກຄ້າລາຍຍ່ອຍຫລາຍຂຶ້ນ ໂດຍຈະເປີດໃຫ້ບໍລິການ DBThai Easy Click

ຊຶ່ງຈະໃຫ້ບໍລິການລົງທະບຽນເປັນສະມາຊິກແລະຊຳລະເງິນເງິນຄ່າສະມາຊິກຜ່ານທາງອິນເທີລ໌ເນັດໄດ້ທັງໝົດ

## 3. ເທັກໂນໂລຍີ

BOL ໃຊ້ Microsoft Windows 2000 Advanced Server ແລະ Microsoft Windows NT 4.0 ພ້ອມຕິດຕັ້ງ Service Pack 4 ເປັນລະບົບປະຕິບັດການທີ່ໃຊ້ໃນລະບົບອອນໄລນ໌ ໂດຍໄດ້ລວບລວມຂໍ້ມູນທີ່ໃຊ້ໃຫ້ບໍລິການມາຈາກຫລາຍແຫ່ງໃນຮູບ-ແບບຕ່າງ ໆກັນ ເຊັ່ນ Standard Delimited File (SDF) XBase (DBF) MS Access (MDB) ແລະ SQL Server ຊຶ່ງໃຊ້ Microsoft SQL 7.0 ແລະພັດທະນາ

ລະບົບສືບຄົ້ນຂໍ້ມູນຂຶ້ນເອງຈາກໂປແກມ SQL

## 4. ການປະກອບການ

BOL ມີລາຍໄດ້ຫລັກ ໆຊຶ່ງຈັດເກັບຈາກລູກຄ້າທີ່ມາໃຊ້ບໍລິການຕ່າງ ໆ ດັ່ງຕໍ່ໄປນີ້

- ການໃຫ້ບໍລິການ BINGO ເປັນບໍລິການເຂົ້າສືບຄົ້ນຂໍ້ມູນບໍລິສັດຕ່າງ ໆ ຖານຂໍ້ມູນບຸກຄົນລົ້ມລະລາຍ (Court Online) ແລະຖານຂໍ້ມູນຂ່າວສານ (NOL) ໂດຍລູກຄ້າສາມາດສືບຄົ້ນຈາກການກຳນົດລາຍລະອຽດ ເຊັ່ນ ຊື່ຂອງບໍລິສັດ ຍອດລາຍໄດ້ ແລະອຸດສາຫະກຳ ເປັນຕົ້ນ ແລະມີຮູບແບບການຄິດຄ່າໃຊ້ບໍລິການເປັນລາຍຊຸດຊົ່ວໂມງຕໍ່ປີ ໃນປະຈຸບັນບໍລິສັດມີການຄິດອັດຕາຄ່າໃຊ້ບໍລິການຢູ່ທີ່ປະມານຊົ່ວໂມງລະ 1, 500 - 3, 000 ບາດ ເຊັ່ນ
    - o 25 ຊົ່ວໂມງຕໍ່ປີ 35, 000 ບາດ
    - o 50 ຊົ່ວໂມງຕໍ່ປີ 55, 000 ບາດ
    - o ບໍ່ຈຳກັດຊົ່ວໂມງຕໍ່ປີ 350, 000-500, 000 ບາດ ຂຶ້ນຢູ່ກັບຈຳນວນບັນຊີທີ່ໃຊ້ເຂົ້າສືບຄົ້ນພ້ອມກັນ
- ການໃຫ້ບໍລິການ DBThai ເປັນບໍລິການຄົ້ນສືບຂໍ້ມູນບໍລິສັດໃນຖານຂໍ້ມູນດຽວກັນກັບ BINGO ແຕ່ມີຮູບແບບການຮຽກຊຳລະເງິນລ່ວງໜ້າ ແລະຫັກຊຳລະຄ່າໃຊ້ບໍລິການຕາມຈຳນວນທີ່ເຂົ້າເບິ່ງຂໍ້ມູນ
- ການໃຫ້ບໍລິການ Business Information Report (BIR) ເປັນບໍລິການຂໍ້ມູນທີ່ຜ່ານການວິເຄາະຈາກນັກວິເຄາະ BIR ມີຂໍ້ມູນຄອບຄຸມທັງໃນປະເທດແລະຕ່າງປະເທດທົ່ວໂລກ ກວ່າ 210 ປະເທດ
- ການໃຫ້ບໍລິການ Customization ເປັນບໍລິການຂໍ້ມູນຕາມຄວາມຕ້ອງການຂອງລູກຄ້າ ໂດຍສະເພາະກຸ່ມລູກຄ້າສະຖາບັນການເງິນທີ່ຕ້ອງການຂໍ້ມູນເພື່ອກໍ່ການວິເຄາະກຸ່ມລູກຄ້າໃນແຕ່ລະອຸດສາຫະກຳ ທັງລວມເຖິງການເຮັດ Industry Norm
- ການໃຫ້ບໍລິການ Data Rationalization ເປັນບໍລິການປັບ-ປຸງຖານຂໍ້ມູນໃຫ້ມີຄຸນນະພາບຫລາຍຂຶ້ນ ເພື່ອເຮັດຮູ້ເຖິງ Portfolio ແລະນຳມາວິເຄາະຕໍ່ໄປ
- ການໃຫ້ບໍລິການຈຳໜ່າຍຂໍ້ມູນຜ່ານໜັງສື ເປັນການດຳເນີນງານສະໜັບ-ສະໜູນຂໍ້ມູນໃນການຜະລິດໜັງສືລາຍນາມບໍລິສັດລາຍໃຫຍ່ 2, 000 ອັນດັບຂອງປະເທດໄທ “Thailand Company Information” ຊຶ່ງຜະລິດແລະຈຳໜ່າຍເປັນປະຈຳທຸກປີ

⌈ນອກຈາກນີ້ ໃນລາວກາງປີ 2544 ບໍລິສັດມີແຜນທີ່ຈະຂະຫຍາຍການໃຫ້ບໍລິການທີ່ຮຽກວ່າ DBThai Easy Click ໄປສູ່ກຸ່ມົດລາດຜູ້-ໃຊ້ລາຍຍ່ອຍ ຊຶ່ງຈະຮຽກເກັບຄ່າບໍລິການໃນການເບິ່ງຂໍ້ມູນເປັນລາຍເທື່ອແລະປະລິມານຂໍ້ມູນ ເທື່ອລະ 90 ບາດ ດ້ວຍບັດລະເຄດິດຜ່ານອິນ-ເທີລ໌ເນັດ

⌈ໃນລະຫວ່າງປີ 2543 BOL ມີລູກຄ້າທີ່ເຂົ້າມາໃຊ້ບໍລິການກວ່າ 650 ລາຍ ແລະມີລາຍໄດ້ລວມທັງໝົດປະມານ 50 ລ້ານບາດ ບໍລິສັດ-ໃຊ້ ພະນັກງານປະຕິບັດງານເຕັມເວລາ (Full-Time) ກວ່າ 60 ຄົນ ເຮັດໜ້າທີ່ກວດສອບຄວາມຖືກຕ້ອງໃນການປັບປຸງແລະກອກຂໍ້ມູນ-ໃໝ່ ແລະພະນັກງານປະຕິບັດງານຊົ່ວຄາວ (Part-Time) ອີກປະມານກວ່າ 150 ຄົນ ເຮັດໜ້າທີ່ກອກແລະປັບປຸງຂໍ້ມູນ

⌈ໃນຕົ້ນປີ 2544 ບໍລິສັດມີຖານຂໍ້ມູນບໍລິສັດທີ່ຈົດທະບຽນໃນປະເທດໄທກວ່າ 520, 000 ແຫ່ງ ຊຶ່ງຈັດເກັບມາຕັ້ງແຕ່ປີ 2536 ແລະໄດ້-ຮ່ວມ ເປັນພັນທະມິດແລກປ່ຽນຂໍ້ມູນກັບບໍລິສັດ Dun & Bradstreet ຊຶ່ງເປັນສູນໃຫ້ບໍລິການຂໍ້ມູນລາຍໃຫຍ່ແຫ່ງໜຶ່ງຂອງໂລກທີ່ມີຖານຂໍ້-ມູນ ຂອງບໍລິສັດ 58 ລ້ານແຫ່ງຈາກ 210 ປະເທດທົ່ວໂລກ

⌈

## 5. ຈຸດເດັ່ນໃນການປະກອບທຸລະກິດ

「ຈຸດເດັ່ນໃນການປະກອບທຸລະກິດພານິດຍ໌ອີນ້ອຍຊໍນິກສ໌ຂອງ BOL ຄື ການນຳເທກໂນໂລຍີສານສົນເທດເຂົ້າມາມີບົດບາດໃນການອຳນວຍ-ຄວາມ ສະດວກໃນການຄົ້ນສືບຂໍ້ມູນໃຫ້ແກ່ລູກຄ້າ ຊຶ່ງສ່ວນໃຫຍ່ເປັນໜ່ວຍງານດ້ານທຸລະກິດທີ່ມີຄວາມຕ້ອງການໃຊ້ຂໍ້ມູນ ແລະມີຄວາມພ້ອມທີ່-ຈະຊຳລະຄ່າບໍລິການ

「ຈຸດເດັ່ນອີກປະການໜຶ່ງຂອງ BOL ກໍຄື ການມີຖານຂໍ້ມູນທາງທຸລະກິດຂະໜາດໃຫຍ່ ຊຶ່ງໄດ້ລວບລວມຈາກການໃຫ້ບໍລິການເປັນເວລາດົນ

## 6. ປັດໄຈໃນຄວາມສຳເລັດ

「ຄວາມສຳເລັດຂອງ BOL ເກີດຂຶ້ນຈາກການມີຄວາມຕ້ອງການໃຊ້ຂໍ້ມູນທາງທຸລະກິດຂອງລູກຄ້າໃນການປະກອບທຸລະກິດໃນສັງຄົມ ເພື່ອ-ຕອບສະໜອງ

ຕໍ່ການຕັດສິນໃຈແລະດຳເນີນທຸລະກິດຫລາຍຂຶ້ນ ນອກຈາກນີ້ ບໍລິສັດຕ້ອງສາມາດອຳນວຍຄວາມສະດວກແລະປັບ-ປຸງບໍລິການຢູ່ສະເໝີ ເພື່ອ-ໃຫ້ເຂົ້າກັບ

ຄວາມຕ້ອງການຂອງລູກຄ້າໄດ້ດີຍິ່ງຂຶ້ນ ເຊັ່ນ ການໃຫ້ບໍລິການຮູບແບບທີ່ສືບຄົ້ນໄດ້ງ່າຍແລະໄດ້ຜົນລັບທ໌ທີ່ກົງກັບຄວາມຕ້ອງການຂອງລູກຄ້າ ແລະການມີ

ຖານຂໍ້ມູນທີ່ຫລາຍແລະຄົບຖ້ວນ ເປັນຕົ້ນ ຈະເປັນສ່ວນໜຶ່ງໃນການສ້າງຄວາມພັກດີ (Brand Royalty) ໃຫ້ກັບບໍລິສັດໄດ້ເປັນຢ່າງດີ

## 7. ທຸລະກິດອື່ນ ໆ ທີ່ມີໂມເດນຄ້າຍກັນ

「ບໍລິສັດອື່ນທີ່ມີຮູບແບບການດຳເນີນທຸລະກິດໃຫ້ບໍລິການສູນລວມຂໍ້ມູນທີ່ຄ້າຍຄືງກັບ BOL ໄດ້ແກ່ ProQuest (ຖານຂໍ້ມູລວານສານ ແລະຂ່າວ www. proquest. com) TableBase (ຖານຂໍ້ມູນບໍລິສັດ www. tablebase. com) Hoover's Online (ຖານຂໍ້ມູນບໍລິສັດ www. hoovers. com) ແລະ Fortune 5000 (ຖານຂໍ້ມູນບໍລິສັດ www. fortune. com) ເປັນຕົ້ນ

## 8. ໂອກາດທາງທຸລະກິດຂອງຜູ້ປະກອບການລາວ